ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ເຂົ້າຮ່ວມກອງປະຊຸມສຳມະນາການນຳຂັ້ນສູງ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ປະເທດໄທ ຄົບຮອບ 80 ປີ





ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ໄດ້ເດີນທາງໄປເຂົ້າຮ່ວມກອງປະຊຸມສຳມະນາການນຳຂັ້ນສູງ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ປະເທດໄທ ຄົບຮອບ 80 ປີໃນຫົວຂໍ້: "ທະນາຄານກາງທ່າມກາງສະພາວະຂອງການປ່ຽນແປງ (Central Banking Amidst Shifting Ground)" ທີ່ຈັດຂຶ້ນລະຫວ່າງວັນທີ 02-03 ທັນວາ 2022 ທີ່ ບາງກອກ, ປະເທດໄທ.

ກອງປະຊຸມຄັ້ງນີ້ເປັນການຈັດຮ່ວມກັນລະຫວ່າງ ທະນາຄານແຫ່ງປະເທດໄທ ແລະ ທະນາຄານຊຳລະສະສາງສາກົນ (BOT-BIS) ເພື່ອເປັນເວທີໃຫ້ແກ່ບັນດາຜູ້ວ່າການທະນາຄານກາງຈາກບັນດາປະເທດຕ່າງໆ ແລະ ອົງການຈັດຕັ້ງສາກົນ ໃນການສົນທະນາແລກປ່ຽນທັດສະນະຕໍ່ກັບບັນຫາທີ່ກະທົບກັບທະນາຄານກາງ, ເປັນຕົ້ນແມ່ນບັນຫາເສດຖະກິດສາກົນ, ບັນຫາເງິນເຟີ້ ແລະ ການພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳດ້ານການເງິນ ລວມທັງບົດບາດຂອງທະນາຄານກາງໃນການຕໍ່ສູ້ກັບການປ່ຽນແປງຂອງສະພາບດິນຟ້າອາກາດ ໃນປັດຈຸບັນ.


BIS
OT-BIS Conference
Central Banking Amidst Shifting Ground


BIS
OT-BIS Conference
Central Banking Amidst Shifting Ground
BOT-BIS Conference


BIS
BOT-BIS Conference
Central Banking Amidst Shifting Ground
中国人民银行
THE PEOPLE'S BANK OF CHINA







 

ການໄປຮ່ວມກອງປະຊຸມຄັ້ງນີ້, ຍັງເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ອັນດີລະຫວ່າງ ລາວ-ໄທ ເວົ້າລວມ, ເວົ້າສະເພາະກໍ່ແມ່ນການພົວພັນຮ່ວມມືລະຫວ່າງສອງທະນາຄານກາງໃຫ້ນັບມື້ນັບແໜ້ນແຟ້ນຍິ່ງໆຂຶ້ນ.